ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 18/ລບ
ນະຄອນຫຼວງວຽງຈັນ, ວັນທີ 26 / 02 / 26

# ດຳລັດ
# ວ່າດ້ວຍຢາງພາລາ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 0044/ກສ, ລົງວັນທີ 09 ມັງກອນ 2026.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ຕິດຕາມ ກວດກາ ວຽກງານຢາງພາລາ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ຮັບປະກັນ ການຜະລິດ ແລະ ການສະໜອງ ຢາງພາລາທີ່ມີຄຸນນະພາບ ໃຫ້ແກ່ໂຮງງານ ແລະ ຕະຫຼາດ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ, ເພີ່ມຄວາມປົກຫຸ້ມຂອງປ່າໄມ້, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ຢາງພາລາ**

ຢາງພາລາ ແມ່ນ ຜົນຜະລິດ ທີ່ໄດ້ຈາກຕົ້ນໄມ້ຢາງພາລາ ຊຶ່ງປະກອບດ້ວຍ ນ້ຳຢາງສົດ, ຢາງກ້ອນຖ້ວຍ ລວມທັງ ໄມ້ຢາງພາລາ ເພື່ອປຸງແຕ່ງເປັນຜະລິດຕະພັນ ຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນຢາງພາລາ** ໝາຍເຖິງ ຢາງພາລາ ທີ່ຜ່ານຂະບວນການປຸງແຕ່ງ ເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເຊັ່ນ ຢາງກ້ອນອັດແໜ້ນ, ຢາງແຜ່ນຮົມຄວັນ ແລະ ຜະລິດຕະພັນຢາງພາລາອື່ນ;
2. **ລານທ້ອນໂຮມຢາງພາລາ** ໝາຍເຖິງ ສະຖານທີ່ເກັບທ້ອນໂຮມຢາງພາລາສຳລັບເກັບ ຊື້ ຂາຍ;
3. **ໂຮງງານປຸງແຕ່ງຢາງພາລາ** ໝາຍເຖິງ ສະຖານທີ່, ອາຄານ ແລະ ເຄື່ອງຈັກ ທີ່ນຳເອົານ້ຳຢາງສົດ, ຢາງກ້ອນຖ້ວຍ ມາປຸງແຕ່ງໃຫ້ເປັນຢາງແຜ່ນສົດ, ຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຢາງພາລາ**

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ບຸກຄົນ ປູກຢາງພາລາ ໃນເຂດທີ່ລັດໄດ້ຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ດ້ວຍການອອກໃບຢັ້ງຢືນ ແລະ ສັນຍາ ການນໍາໃຊ້ທີ່ດິນປ່າໄມ້ແບບມີກໍານົດ ໃນເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕາມກົດໝາຍ ແລະ ລະບຽບການ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກຢາງພາລາ ໃສ່ທີ່ດິນກະສິກໍາ ເຂດທີ່ໄດ້ຈັດສັນການນໍາໃຊ້ ສໍາລັບທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນໍາໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອສ້າງລາຍຮັບ, ເປັນສິນຄ້າ ແລະ ເປັນວັດຖຸດິບສະໜອງໃຫ້ແກ່ການປຸງແຕ່ງ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກຢາງພາລາ ດ້ວຍການວາງນະໂຍບາຍທີ່ເໝາະສົມ ເຊັ່ນ ການຮັບຮູ້ ແລະ ປົກປ້ອງສິດຜົນປະໂຫຍດ, ການບໍລິການທາງດ້ານເຕັກນິກວິຊາການ, ນະໂຍບາຍດ້ານ ສິນເຊື່ອ, ຍົກເວັ້ນ ຄ່າບູລະນະປ່າໄມ້ ແລະ ຄ່າຊັບພະຍາກອນປ່າໄມ້ ແລະ ນະໂຍບາຍອື່ນ ຕາມກົດໝາຍ.

**ມາດຕາ 5 ຫຼັກການ ກ່ຽວກັບວຽກງານຢາງພາລາ**

ວຽກງານຢາງພາລາ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຍຸດທະສາດປ່າໄມ້;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການສະໜອງ ວັດຖຸດິບ ໃຫ້ແກ່ໂຮງງານປຸງແຕ່ງ ຕາມຄວາມຕ້ອງການຂອງຕະຫຼາດ;
4. ຮັບປະກັນການນໍາໃຊ້ຢາງພາລາ ໃຫ້ເກີດຜົນປະໂຫຍດສູງສຸດ, ບໍ່ສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມເປັນຕົ້ນ ຄຸນນະພາບຂອງ ດິນ, ນໍ້າ ແລະ ຊັບພະຍາກອນນໍ້າ ລວມທັງເສດຖະກິດ-ສັງຄົມ;
5. ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ຢາງພາລາ ຢ່າງມີປະສິດທິຜົນ ໂດຍການມີສ່ວນຮ່ວມ ຂອງປະຊາຊົນ.

**ມາດຕາ 6 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຢາງພາລາ ຢູ່ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງຢາງພາລາ

**ມາດຕາ 7 ການຄຸ້ມຄອງຢາງພາລາ**

ການຄຸ້ມຄອງຢາງພາລາ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການເກັບກໍາຂໍ້ມູນຢາງພາລາ;
2. ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ຢາງພາລາ;
3. ການຂີດຢາງພາລາ;
4. ຕັດໄມ້ຢາງພາລາ;
5. ການຊື້ ຂາຍ ຢາງພາລາ;
6. ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ແນວພັນ, ໄມ້ ແລະ ຜະລິດຕະພັນ ຢາງພາລາ;
7. ການເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ;
8. ການກໍານົດມາດຕະຖານຢາງພາລາ;
9. ການຄົ້ນຄວ້າທົດລອງ ຢາງພາລາ;

10. ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ;
11. ການປະຕິບັດມາດຕະຖານສິ່ງແວດລ້ອມ.

**ມາດຕາ 8 ການເກັບກຳຂໍ້ມູນຢາງພາລາ**

ການເກັບກຳຂໍ້ມູນຢາງພາລາ ແມ່ນ ການເກັບກຳສະຖິຕິ ການປູກ, ການຂຶ້ນທະບຽນ, ການຂີດຢາງ, ການຕັດໄມ້, ການປຸງແຕ່ງ, ການຊື້ ຂາຍ, ການສົ່ງອອກ, ການນຳເຂົ້າ ແລະ ສົ່ງຜ່ານ ຢາງພາລາ ແລະ ຂໍ້ມູນອື່ນ ທີ່ຈຳເປັນນຳບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ເກັບຮັກສາໄວ້ ໃນລະບົບຖານຂໍ້ມູນ ດ້ວຍຮູບແບບເອເລັກໂຕຣນິກ ແລະ ໃນຮູບແບບເຈ້ຍ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເກັບກຳຂໍ້ມູນ ກ່ຽວກັບຢາງພາລາ ລວມທັງ ສະໜອງ ແລະ ແລກປ່ຽນຂໍ້ມູນດັ່ງກ່າວ ໂດຍສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 9 ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີປ່າປູກ ຫຼື ໄມ້ປູກ ຢາງພາລາ ຕ້ອງໄດ້ ຂຶ້ນທະບຽນປ່າປູກ ຫຼື ຢັ້ງຢືນໄມ້ປູກ ເພື່ອ ຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງ ນໍ້າຢາງ ແລະ ໄມ້ຢາງພາລາ ທີ່ຕົນປູກ, ອຳນວຍຄວາມສະດວກໃນການ ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ປະຕິບັດນະໂຍບາຍສົ່ງເສີມການປູກ ຕາມກົດໝາຍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີປ່າປູກຢາງພາລາ ໃຫ້ຍື່ນຄຳຮ້ອງຂໍຂຶ້ນທະບຽນປ່າປູກ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ. ສຳລັບ ໄມ້ປູກຢາງພາລາ ທີ່ປູກໃນເນື້ອທີ່ຕໍ່າກວ່າ ໜຶ່ງພັນຫົກຮ້ອຍຕາແມັດ ຫຼື ປູກແບບກະແຈກກະຈາຍ ໃຫ້ຢັ້ງຢືນໄມ້ປູກ ນຳຄະນະກຳມະການປົກຄອງຕາແສງ.

ການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ຢາງພາລາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ການຂີດຢາງພາລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງປ່າປູກຢາງພາລາ ສາມາດຂີດໄດ້ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງສະໜອງຂໍ້ມູນ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ການຂີດຢາງພາລາ ຕ້ອງຮັບປະກັນ ຄຸນນະພາບ, ປະລິມານ ອາຍຸການໃຫ້ ນໍ້າຢາງ ແລະ ຕ້ອງຮັບປະກັນທາງດ້ານເຕັກນິກຂອງການຂີດຢາງພາລາ ເປັນຕົ້ນ ອາຍຸຂອງຕົ້ນຢາງພາລາ ແຕ່ ຫ້າປີ ຂຶ້ນໄປ ໂດຍອີງໃສ່ການເຕີບໂຕຕົວຈິງຂອງຕົ້ນຢາງພາລາ, ຈຸດເລີ່ມຕົ້ນຂີດຢາງ ຫ່າງຈາກໜ້າດິນ ແຕ່ ໜຶ່ງຮ້ອຍຫ້າສິບຊັງຕີແມັດ ລົງມາ ແລະ ມີໜ້າຕ້າງວັດຮອບ ແຕ່ ຫ້າສິບຊັງຕີແມັດ ຂຶ້ນໄປ, ໄລຍະເວລາຂີດທີ່ໃຫ້ນໍ້າຢາງຫຼາຍ ແມ່ນເລີ່ມ ແຕ່ ໜຶ່ງ ຫາ ຫົກ ໂມງ ເຊົ້າ ແລະ ແຕ່ລະຕົ້ນ ໃຫ້ຂີດບາມໍ້.

ຜູ້ຂີດຢາງພາລາ ຕ້ອງປະຕິບັດຕາມເຕັກນິກວິຊາການ ຂອງການຂີດຢາງພາລາ ຢ່າງຖືກຕ້ອງ.

ສຳລັບ ເຕັກນິກວິຊາການ ຂອງການຂີດຢາງພາລາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ການຕັດໄມ້ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງປ່າປູກຢາງພາລາ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຢັ້ງຢືນໄມ້ປູກ ຢາງພາລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງດຳລັດສະບັບນີ້ ສາມາດຕັດໄດ້ ໂດຍບໍ່ຈຳເປັນ ສຳຫຼວດ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ກ່ອນຈະຕັດນັ້ນ ຕ້ອງລາຍງານ ແລະ ແຈ້ງ ສະຖານທີ່, ຈຳນວນຕົ້ນ ທີ່ຈະຕັດໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ໂດຍຄັດຕິດໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ຢາງພາລາ ເພື່ອຢັ້ງຢືນກຳມະສິດ.

ສຳລັບ ການຕັດໄມ້ຢາງພາລາ ເພື່ອໃຊ້ໃນຄອບຄົວ ແລະ ສາທາລະນະປະໂຫຍດນັ້ນ ຈະໄດ້ຮັບການຍົກເວັ້ນຄ່າຊັບພະຍາກອນ, ຄ່າບຸລະນະ ແລະ ຄ່າພັນທະຕ່າງໆ ແຕ່ຕ້ອງໄດ້ລາຍງານຈຳນວນບໍລິມາດໄມ້ ຫຼື ນໍ້າໜັກຂອງໄມ້ ໃຫ້ຄະນະກຳມະການປົກຄອງຕາແສງ.

**ມາດຕາ 12 ການຊື້ ຂາຍ ຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງ ປ່າປູກ ຫຼື ໄມ້ປູກ ຢາງພາລາ ສາມາດ ຂາຍ ນ້ຳຢາງສົດ, ຢາງກ້ອນຖ້ວຍ ລວມທັງ ໄມ້ຢາງພາລາ ທີ່ເປັນກຳມະສິດຂອງຕົນ.

ສຳລັບ ຜູ້ເກັບຊື້ຢາງພາລາ ຕ້ອງໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງດຳລັດສະບັບນີ້. ໃນກໍລະນີ ມີລານທ້ອນໂຮມຢາງພາລາ ຕ້ອງໄດ້ຮັບອະນຸຍາດ ຈາກຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 13 ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ແນວພັນ, ໄມ້ ແລະ ຜະລິດຕະພັນ ຢາງພາລາ**

ການນຳເຂົ້າ ແນວພັນ, ໄມ້ ແລະ ຜະລິດຕະພັນ ຢາງພາລາ ເພື່ອຕອບສະໜອງຄວາມຕ້ອງການໃນການນຳໃຊ້ພາຍໃນ ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມທັງຜ່ານການກວດກາ ຂອງເຈົ້າໜ້າທີ່ກັກກັນພືດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

ການສົ່ງອອກ ແນວພັນ, ໄມ້ ແລະ ຜະລິດຕະພັນ ຢາງພາລາ ຕ້ອງຂໍອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໂດຍມີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຈາກຂະແໜງການອຸດສະຫະກຳ ແລະ ການຄ້າ ແລະ ປະຕິບັດພັນທະທາງການເງິນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ, ສ່ວນໄມ້ຢາງພາລາ ສາມາດສົ່ງອອກເປັນທ່ອນໄດ້ ແຕ່ຕ້ອງມີໃບທະບຽນປ່າປູກ ແລະ ໃບຢັ້ງຢືນໄມ້ປູກ ຢາງພາລາ.

ການສົ່ງຜ່ານ ແນວພັນ, ໄມ້ ແລະ ຜະລິດຕະພັນ ຢາງພາລາ ລວມທັງນ້ຳຢາງ ແລະ ຢາງກ້ອນຖ້ວຍ ສາມາດດຳເນີນໄດ້ ໂດຍບໍ່ຕ້ອງຂໍອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ, ແຕ່ຕ້ອງປະຕິບັດ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 14 ການເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ**

ຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ສາມາດເຄື່ອນຍ້າຍໄດ້ ໂດຍບໍ່ຈຳເປັນຂໍອະນຸຍາດ ແຕ່ເຈົ້າຂອງຢາງພາລາ ຕ້ອງລາຍງານ ບໍລິມາດ ຫຼື ນ້ຳໜັກ ຂອງຢາງພາລາ ແລະ ຜະລິດຕະພັນຢາງພາລາ ທີ່ຈະເຄື່ອນຍ້າຍ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ສຳລັບ ການເຄື່ອນຍ້າຍ ໄມ້ຢາງພາລາ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຢັ້ງຢືນໄມ້ປູກ ພາຍໃນປະເທດ ຕ້ອງລາຍງານ ສະຖານທີ່, ຈຳນວນຕົ້ນ ແລະ ບໍລິມາດ ຫຼື ນ້ຳໜັກໄມ້ ທີ່ຕັດ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

**ມາດຕາ 15 ການກຳນົດມາດຕະຖານຢາງພາລາ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ສະເໜີສ້າງມາດຕະຖານຢາງພາລາ ຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍມາດຕະຖານ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກວດກາ, ວິໄຈ ແລະ ຢັ້ງຢືນ ຄຸນນະພາບຢາງພາລາ ຕາມມາດຕະຖານຢາງພາລາ ທີ່ໄດ້ກຳນົດ.

ການຢັ້ງຢືນມາດຕະຖານຢາງພາລາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການຄົ້ນຄວ້າທົດລອງຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນການຄົ້ນຄວ້າທົດລອງຢາງພາລາ ດ້ວຍການລົງທຶນສ້າງສະຖາບັນ ຫຼື ສູນຄົ້ນຄວ້າທົດລອງ ທາງດ້ານວິຊາການ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຢາງພາລາ ແລະ ໄມ້ຢາງພາລາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ເປັນມິດຕໍ່ສິ່ງແວດລ້ອມ.

ການຄົ້ນຄວ້າທົດລອງຢາງພາລາ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 17 ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ**

ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ ແມ່ນ ການຄຸ້ມຄອງ ການສ້າງຕັ້ງໂຮງງານ, ການສ້າງແຜນການເຄື່ອນໄຫວກິດຈະກຳໂຮງງານ, ການຄຸ້ມຄອງ ຂະບວນການຜະລິດ ແລະ ການປຸງແຕ່ງ, ວັດຖຸດິບ ແລະ ຜະລິດຕະພັນ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 18 ການປະຕິບັດມາດຕະຖານສິ່ງແວດລ້ອມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວກັບຢາງພາລາ ຕ້ອງປະຕິບັດມາດຕະການປ້ອງກັນ, ຫຼຸດຜ່ອນ, ແກ້ໄຂ ຜົນກະທົບຕໍ່ສິ່ງແວດລ້ອມ ຈາກການດຳເນີນໂຄງການລົງທຶນ ຫຼື ກິດຈະການ ຂອງຕົນໂດຍມີມາດຕະການຄວບຄຸມການປ່ອຍມົນລະພິດ ບໍ່ໃຫ້ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ.

## ໝວດທີ 3
## ການປົກປັກຮັກສາຢາງພາລາ

**ມາດຕາ 19 ການປົກປັກຮັກສາຢາງພາລາ**

ການປົກປັກຮັກສາ ຢາງພາລາ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການປົກປັກຮັກສາ ແຫຼ່ງແນວພັນຢາງພາລາ;
2. ການກັນ, ຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ;
3. ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ ປ່າປູກຢາງພາລາ.

**ມາດຕາ 20 ການປົກປັກຮັກສາແຫຼ່ງແນວພັນຢາງພາລາ**

ການປົກປັກຮັກສາແຫຼ່ງແນວພັນຢາງພາລາ ແມ່ນ ການກຳນົດ ແລະ ປະຕິບັດ ມາດຕະການ ເພື່ອເຮັດໃຫ້ມີແນວພັນຢາງພາລາ ທີ່ມີຄຸນນະພາບ ແລະ ສາມາດຕອບສະໜອງ ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ.

ການປົກປັກຮັກສາແຫຼ່ງແນວພັນຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດລະບຽບການ ແລະ ມາດຕະການ ໃນການປົກປັກຮັກສາແຫຼ່ງແນວພັນ;
2. ໂຄສະນາເຜີຍແຜ່ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຮູ້ເຖິງຄວາມສຳຄັນ ຂອງແນວພັນ;
3. ສຳຫຼວດປະເມີນແຫຼ່ງແນວພັນ;
4. ຂຶ້ນທະບຽນແຫຼ່ງແນວພັນ;
5. ຕິດຕາມ ແລະ ປະເມີນ ຄຸນນະພາບແຫຼ່ງແນວພັນໃນແຕ່ລະໄລຍະ;
6. ສ້າງເຄືອຂ່າຍ ລະຫວ່າງຜູ້ປົກປັກຮັກສາ ແລະ ຜູ້ຊົມໃຊ້ ແນວພັນ;
7. ມີການເຄື່ອນໄຫວອື່ນທີ່ມີຄວາມຈຳເປັນ.

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງ ແລະ ຢັ້ງຢືນ ແຫຼ່ງແນວພັນຢາງພາລາ.

**ມາດຕາ 21 ການກັນ, ຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ**

ການກັນ, ຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ແມ່ນ ການປ້ອງກັນບໍ່ໃຫ້ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ເກີດຂຶ້ນ, ລະບາດ ໃນປ່າປູກ ຫຼື ໄມ້ປູກ ຢາງພາລາ ແລະ ແກ້ໄຂ ໃຫ້ມີປະສິດທິພາບ ທັນເວລາ.

ການກັນ, ການຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ໃນປ່າປູກ ຫຼື ໄມ້ປູກ ຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ສຶກສາຂໍ້ມູນການເກີດ ແລະ ການລະບາດຂອງເຊື້ອພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ;

2. ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ໃນເຂດປ່າປູກ ຫຼື ໄມ້ປູກ ຂອງຕົນ;

3. ກຳນົດເຂດປອດພະຍາດ ແລະ ເຂດປ້ອງກັນ;

4. ຄົ້ນຄວ້າການກັກກັນ ແລະ ຕ້ານພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ, ອອກໃບຢັ້ງຢືນ ການຄຸ້ມຄອງການຜະລິດ, ການແຈກຢາຍ ແລະ ການນຳໃຊ້ແນວພັນໄມ້ທີ່ປອດພະຍາດ;

5. ບໍ່ອະນຸຍາດໃຫ້ນຳເຂົ້າ ຫຼື ເຄື່ອນຍ້າຍແນວພັນຢາງພາລາ ທີ່ມີເຊື້ອພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ຢ່າງເດັດຂາດ;

6. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

### ມາດຕາ 22 ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ ປ່າປູກຢາງພາລາ

ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ ປ່າປູກຢາງພາລາ ແມ່ນ ການປ້ອງກັນປ່າປູກຢາງພາລາ ບໍ່ໃຫ້ຖືກ ທຳລາຍດ້ວຍອັກຄີໄພ.

ການສະກັດກັ້ນ ແລະ ຕ້ານໄຟໄໝ້ ປ່າປູກຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດມາດຕະການທີ່ຈຳເປັນ ກ່ຽວກັບການຕິດຕາມ, ເຝົ້າລະວັງ, ສະກັດກັ້ນ ແລະ ຕ້ານໄຟໄໝ້;
2. ກຳນົດເຂດທີ່ມີຄວາມສ່ຽງ ເພື່ອວາງແຜນປ້ອງກັນໄຟໄໝ້ລາມປ່າປູກຢາງພາລາ ໃຫ້ທັນລະດູການ;
3. ຕິດຕາມ ກວດກາ ແລະ ລາດຕະເວນ ຂອບເຂດ ທີ່ມີຄວາມສ່ຽງ;
4. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

## ໝວດທີ 4
## ການພັດທະນາຢາງພາລາ

### ມາດຕາ 23 ການພັດທະນາຢາງພາລາ

ການພັດທະນາຢາງພາລາ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການກຳນົດເນື້ອທີ່ດິນປູກຢາງພາລາ;
2. ການປູກຢາງພາລາ;
3. ການພັດທະນາແນວພັນຢາງພາລາ;
4. ການນຳໃຊ້ເຕັກໂນໂລຊີ;
5. ການພັດທະນາ ກຸ່ມ, ສະຫະກອນ ແລະ ສະມາຄົມ ຢາງພາລາ.

### ມາດຕາ 24 ການກຳນົດເນື້ອທີ່ດິນປູກຢາງພາລາ

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການ, ອົງການ , ອົງການປົກຄອງ ທ້ອງຖິ່ນ ແລະ ປະຊາຊົນໃນເຂດທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການ ສຳຫຼວດ, ຈັດສັນ ແລະ ກຳນົດເນື້ອທີ່ດິນປູກ ຢາງພາລາ ເພື່ອວາງແຜນສົ່ງເສີມການປູກຢາງພາລາ.

ການກຳນົດເນື້ອທີ່ ປູກຢາງພາລາ ຕ້ອງຢູ່ໃນ ເຂດທີ່ລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ເຂດທີ່ດິນກະສິກຳ ທີ່ນຳໃຊ້ເຂົ້າໃນເປົ້າໝາຍ ປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ຊຶ່ງໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງ ຖືກຕ້ອງຕາມກົດໝາຍ.

### ມາດຕາ 25 ການປູກຢາງພາລາ

ການປູກຢາງພາລາ ສາມາດປູກໄດ້ ໂດຍໃຫ້ປະຕິບັດ ດັ່ງນີ້:

1. ການປູກຢາງພາລາ ຂອງບຸກຄົນ ໃນເຂດປ່າຜະລິດ ຊຶ່ງລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນຕອນດັ່ງກ່າວ ສາມາດຂີດ, ຕັດໄມ້, ຂາຍ ແລະ ເຄື່ອນຍ້າຍ ຢາງ ແລະ ໄມ້ ຢາງພາລາໄດ້;

2. ການປູກຢາງພາລາ ຂອງບຸກຄົນ ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ຫຼື ທີ່ດິນແຄມນ້ຳ ຊຶ່ງລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ສາມາດຂຶດ, ຂາຍ ແລະ ເຄື່ອນຍ້າຍ ຢາງພາລາໄດ້, ແຕ່ບໍ່ອະນຸຍາດໃຫ້ຕັດໄມ້ຢາງພາລາ ເພື່ອເປົ້າໝາຍທາງດ້ານການຄ້າ;

3. ການປູກຢາງພາລາ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນທີ່ດິນກະສິກຳ ທີ່ນຳໃຊ້ເຂົ້າໃນເປົ້າໝາຍ ປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສາມາດຂຶດ, ຕັດໄມ້, ຂາຍ ແລະ ເຄື່ອນຍ້າຍ ຢາງ ແລະ ໄມ້ ຢາງພາລາໄດ້.

ການປູກຢາງພາລາທີ່ມີເນື້ອທີ່ຫຼາຍກວ່າ ຊາວເຮັກຕາ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດ ຕາມກຳນົດໄວ້ໃນມາດຕາ 32 ຂອງດຳລັດສະບັບນີ້.

**ມາດຕາ 26 ການພັດທະນາແນວພັນຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນ ການພັດທະນາແນວພັນຢາງພາລາ ໂດຍການຄົ້ນຄວ້າທົດລອງ, ປັບປຸງພັນ, ຂະຫຍາຍພັນ ຢາງພາລາ ໃຫ້ມີປະສິດທິພາບ, ປະສິດທິຜົນ, ທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລ້ວລາຍງານຜົນຂອງການພັດທະນາຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຢັ້ງຢືນ.

**ມາດຕາ 27 ການນຳໃຊ້ເຕັກໂນໂລຊີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ ເຕັກນິກວິຊາການ, ເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ ເຂົ້າໃນການເຄື່ອນໄຫວກິດຈະການຢາງພາລາ ເປັນຕົ້ນ ການຜະລິດແນວພັນ, ການປູກ, ການປ້ອງກັນພະຍາດໄມ້, ບົ້ງ ແມງ ແລະ ການປຸງແຕ່ງຢາງພາລາ ທີ່ສະອາດ ແລະ ມີປະສິດທິຜົນສູງ.

**ມາດຕາ 28 ການພັດທະນາ ກຸ່ມ, ສະຫະກອນ ແລະ ສະມາຄົມ ຢາງພາລາ**

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສ້າງຕັ້ງ ແລະ ພັດທະນາ ກຸ່ມ, ສະຫະກອນ ຫຼື ສະມາຄົມ ຢາງພາລາ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ແລະ ສ້າງເງື່ອນໄຂ ໃຫ້ການເຄື່ອນໄຫວກິດຈະການຢາງພາລາ ມີຄວາມຍືນຍົງ ຕິດພັນກັບ ການສ້າງ ແລະ ພັດທະນາສີມືແຮງງານ ເປັນຕົ້ນ ດ້ານເຕັກນິກວິຊາການ, ດ້ານທຶນຮອນ, ເຂົ້າເຖິງແຫຼ່ງທຶນ, ຕະຫຼາດພາຍໃນພາກພື້ນ ແລະ ສາກົນ.

## ໝວດທີ 5
## ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ

**ມາດຕາ 29 ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ**

ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ ແມ່ນ ບ່ອນເກັບກຳ ເອກະສານ, ຕົວເລກ, ສະຖິຕິ, ແຜນທີ່, ພາບຖ່າຍທາງອາກາດ ແລະ ຂໍ້ມູນອື່ນ ກ່ຽວກັບຢາງພາລາ ໃນຮູບແບບ ເອເລັກໂຕຣນິກ ແລະ ເຈ້ຍ ທີ່ນຳໃຊ້ເຕັກໂນໂລຊີທັນສະໄໝ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຢາງພາລາ ໃຫ້ມີຄຸນນະພາບ, ມີຄວາມສະດວກ, ວ່ອງໄວ ແລະ ຊັດເຈນ.

**ມາດຕາ 30 ການສ້າງ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບຜິດຊອບ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນຂ່າວສານ ກ່ຽວກັບຢາງພາລາ ໂດຍເຊື່ອມຕໍ່ກັບຖານຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳ ແລະ ສິ່ງແວດລ້ອມ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ສິ່ງແວດລ້ອມ, ພະແນກການທີ່ກ່ຽວຂ້ອງ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ ດັ່ງກ່າວ ລວມທັງ

ການສະໜອງຂໍ້ມູນ ກ່ຽວກັບຢາງພາລາ ໃນຄວາມຮັບຜິດຊອບຂອງຕົນ ໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 31 ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ ໃນລະບົບຂໍ້ມູນ ຂ່າວສານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ສຳລັບການນຳໃຊ້ຂໍ້ມູນ ກ່ຽວກັບຢາງພາລາ ທີ່ເປັນອັນສະເພາະ ເປັນຕົ້ນ ແຜນທີ່ກຳນົດເຂດປູກຢາງພາລາ, ຜົນການຄົ້ນຄວ້າທົດລອງຢາງພາລາ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໂດຍ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ທຸລະກິດກ່ຽວກັບຢາງພາລາ

**ມາດຕາ 32 ການດຳເນີນທຸລະກິດກ່ຽວກັບຢາງພາລາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບຢາງພາລາ ໃຫ້ແຈ້ງຂຶ້ນທະບຽນ ວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 33 ປະເພດທຸລະກິດກ່ຽວກັບຢາງພາລາ**

ປະເພດທຸລະກິດກ່ຽວກັບຢາງພາລາ ມີ ດັ່ງນີ້:

1. ການຜະລິດ ແນວພັນ ແລະ ເບ້ຍ ຢາງພາລາ;
2. ການປູກຢາງພາລາ ເພື່ອການຄ້າ;
3. ການປຸງແຕ່ງຢາງພາລາ;
4. ການສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນໄມ້ຢາງພາລາ;
5. ການນຳເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນ ຢາງພາລາ;
6. ການຊື້ ຂາຍ ສິນເຊື່ອກາກບອນ ຈາກປ່າປູກຢາງພາລາ;
7. ການເກັບຊື້ຢາງພາລາ;
8. ທຸລະກິດອື່ນກ່ຽວກັບຢາງພາລາ.

**ມາດຕາ 34 ເງື່ອນໄຂໃນການດຳເນີນທຸລະກິດກ່ຽວກັບຢາງພາລາ**

ການດຳເນີນທຸລະກິດກ່ຽວກັບຢາງພາລາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ທຶນທີ່ພຽງພໍຕາມແຕ່ລະປະເພດທຸລະກິດ;
3. ບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ ທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ;
4. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ.

**ມາດຕາ 35 ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ;

4. ສຳເນົາໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຖ້າມີ;
5. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ.

**ມາດຕາ 36 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 37 ອາຍຸການນຳໃຊ້ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ມີອາຍຸການນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້.

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຕ້ອງດຳເນີນກ່ອນໃບອະນຸຍາດດຳເນີນທຸລະກິດຈະໝົດອາຍຸ ຫົກສິບວັນ.

**ມາດຕາ 38 ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດກ່ຽວກັບຢາງພາລາ ຈະຖືກໂຈະການເຄື່ອນໄຫວ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງ ຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ໄປຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;
4. ໂຈະການນຳໃຊ້ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຖ້າມີ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 39 ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຈະຖືກຖອນໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມຄຳສັ່ງໂຈະ. ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ໝວດທີ 7
## ຄະນະກຳມະການຢາງພາລາ

**ມາດຕາ 40 ຄະນະກຳມະການຢາງພາລາ**

ຄະນະກຳມະການຢາງພາລາ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດ ໃນການຄົ້ນຄວ້າ, ຊຸກຍູ້ ແລະ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດວຽກງານຢາງພາລາ ໂດຍມີກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນກອງເລຂາ.

ຄະນະກຳມະການຢາງພາລາ ປະກອບດ້ວຍ:

1. ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນປະທານ;

2. ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
5. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
6. ຮອງປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເປັນຄະນະ;
7. ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ;
8. ປະທານສະມາຄົມຢາງພາລາລາວ ເປັນຄະນະ;
9. ຫົວໜ້າກົມປ່າໄມ້ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ ທັງເປັນຫົວໜ້າກອງເລຂາ.

ໃນກໍລະນີຈຳເປັນ ນາຍົກລັດຖະມົນຕີ ສາມາດແຕ່ງຕັ້ງບຸກຄະລາກອນເຂົ້າໃນຄະນະກຳມະການຢາງພາລາ ເພີ່ມຕື່ມໄດ້.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຢາງພາລາ**

ຄະນະກຳມະການຢາງພາລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຢາງພາລາ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມ ຂອງປະເທດ ໃນແຕ່ລະໄລຍະ;
2. ຊຸກຍູ້ ແລະ ປະສານສົມທົບ ກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຫັນເອົານະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບຢາງພາລາ ຂອງຂັ້ນເທິງ ມາເປັນແຜນງານ, ແຜນການ ແລະ ໂຄງການລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ ການພັດທະນາ ແລະ ຄຸ້ມຄອງ ຕະຫຼາດ ຊື້ ຂາຍ ຢາງພາລາ;
4. ຈັດ ຫຼື ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ກ່ຽວກັບວຽກງານຢາງພາລາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊີນ ແລະ ຕາມການມອບໝາຍຂອງຂັ້ນເທິງ;
5. ແຕ່ງຕັ້ງຄະນະສະເພາະກິດ ເພື່ອຊ່ວຍວຽກງານໃດໜຶ່ງ;
6. ຊຸກຍູ້, ແນະນຳ, ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານຢາງພາລາ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຢາງພາລາຂອງຕົນ ໃຫ້ລັດຖະບານ ໃນແຕ່ລະໄລຍະ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການຢາງພາລາ**

ກອງເລຂາຄະນະກຳມະການຢາງພາລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຢາງພາລາ ເພື່ອສະເໜີຄະນະກຳມະການຢາງພາລາ ພິຈາລະນາ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບຢາງພາລາ;
3. ເກັບກຳ ແລະ ສັງລວມຂໍ້ມູນ ໃນຮູບແບບຕ່າງໆ ກ່ຽວກັບຢາງພາລາ ເພື່ອລາຍງານຄະນະກຳມະການຢາງພາລາ ໃນແຕ່ລະໄລຍະ;
4. ສ້າງ, ຄຸ້ມຄອງ ແລະ ພັດທະນາ ລະບົບຖານຂໍ້ມູນ ກ່ຽວກັບຢາງພາລາ ເພື່ອຮັບປະກັນການນຳໃຊ້ທີ່ສະດວກ ແລະ ທົ່ວເຖິງ;
5. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດວຽກງານຢາງພາລາ;
6. ກະກຽມ ຫຼື ເຂົ້າຮ່ວມ ກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ກ່ຽວກັບວຽກງານຢາງພາລາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊີນ ແລະ ຕາມການມອບໝາຍຂອງຂັ້ນເທິງ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຄະນະກຳມະການຢາງພາລາ ໃນແຕ່ລະໄລຍະ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການມອບໝາຍ.

## ໝວດທີ 8
## ຂໍ້ຫ້າມ

### ມາດຕາ 43 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບຢາງພາລາ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
3. ຂີດຢາງ, ເລັ່ງນ້ຳຢາງ, ນຳໃຊ້ສານເຄມີ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຕົ້ນຢາງພາລາຂອງບຸກຄົນອື່ນ;
4. ຂາຍຢາງພາລາ ທີ່ບໍ່ສາມາດຢັ້ງຢືນແຫຼ່ງທີ່ມາ ຫຼື ບໍ່ແມ່ນກຳມະສິດຂອງຕົນ;
5. ຕັດໄມ້ຢາງພາລາ ໂດຍບໍ່ມີ ການຢັ້ງຢືນກຳມະສິດ ຫຼື ລາຍງານຕໍ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ;
6. ບຸກລຸກ ແລະ ຂະຫຍາຍພື້ນທີ່ການປູກຢາງພາລາ ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;
7. ປູກຢາງພາລາໃສ່ເຂດທີ່ດິນນາ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 44 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ

ຫ້າມ ຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບການອະນຸຍາດ ແລະ ເງື່ອນໄຂຂອງການດຳເນີນທຸລະກິດ;
2. ເຄື່ອນຍ້າຍ ຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ໂດຍບໍ່ມີການລາຍງານ;
3. ດຳເນີນໂຄງການ ຫຼື ກິດຈະການ ກ່ຽວກັບຢາງພາລາ ທີ່ກໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ;
4. ຊື້ ຂາຍ ຢາງພາລາ ທີ່ບໍ່ສາມາດຢັ້ງຢືນແຫຼ່ງທີ່ມາ ຫຼື ບໍ່ແມ່ນກຳມະສິດຂອງຕົນ;
5. ສົ່ງອອກ ແລະ ນຳເຂົ້າ ນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ;
6. ນຳເຂົ້າ ຫຼື ນຳໃຊ້ ທາດເຄມີອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
7. ໃຫ້, ເປັນສື່ກາງໃນການໃຫ້ ສິນບົນ ແກ່ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
8. ປອມແປງເອກະສານ, ປິດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 45 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;
2. ຂໍເອົາ, ທວງເອົາ ຫຼື ຮັບ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ;
3. ເປີດເຜີຍຄວາມລັບທາງການຄ້າ ຂອງຜູ້ດຳເນີນທຸລະກິດກ່ຽວກັບວຽກງານຢາງພາລາ;
4. ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນ;
5. ອອກ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ

**ມາດຕາ 46 ການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຢາງພາລາ ປະກອບມີ:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ;
4. ຄະນະກຳມະການປົກຄອງຕາແສງ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຢາງພາລາ ເພື່ອສະເໜີ ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຢາງພາລາ ມາເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຢາງພາລາ;
4. ອອກ, ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຢາງພາລາ;
5. ເກັບກຳຂໍ້ມູນ ແລະ ສຳຫຼວດ ສະຖິຕິ ເພື່ອສ້າງຖານຂໍ້ມູນ ການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກ ຢາງພາລາ ໃນຂອບເຂດທົ່ວປະເທດ;
6. ສຳຫຼວດ, ເຕົ້າໂຮມ, ອະນຸລັກ, ສຶກສາ ສ້າງສວນແຫຼ່ງແກ່ນພັນຢາງພາລາ, ຄັດເລືອກແນວພັນຢາງພາລາ ແລະ ພັນຢາງພາລາ ນຳເຂົ້າຈາກຕ່າງປະເທດ ທີ່ມີທ່າແຮງທາງດ້ານເສດຖະກິດ;
7. ຄົ້ນຄວ້າ ນຳໃຊ້ບັນດາເຕັກໂນໂລຊີການຜະລິດທີ່ມີປະສິດທິຜົນສູງ ກ່ຽວກັບການຂະຫຍາຍແນວພັນຢາງພາລາ, ກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບ ແນວພັນຢາງພາລາ;
8. ເກັບກຳຂໍ້ມູນ ແລະ ຕົວຢ່າງ ຢາງພາລາ ແລະ ໄມ້ຢາງພາລາ ຈາກປ່າປູກຢາງພາລາ ແລະ ໂຮງງານປຸງແຕ່ງ ເພື່ອກວດກາ, ວິໄຈ ແລະ ຢັ້ງຢືນຄຸນນະພາບ ໃນແຕ່ລະໄລຍະ;
9. ອອກ, ຖອນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຫຼື ໂຈະການດຳເນີນທຸລະກິດກ່ຽວກັບຢາງພາລາ;
10. ເກັບກຳ ຂໍ້ມູນ, ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ;
11. ສ້າງ, ບຳລຸງ, ຍົກລະດັບ, ຝຶກອົບຮົມ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຢາງພາລາ;
12. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຢາງພາລາ;
13. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ສົ່ງເສີມ ແລະ ຕິດຕາມ ກວດກາ ວຽກງານຢາງພາລາ ໃນຂອບເຂດທົ່ວປະເທດ;
14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາງພາລາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 48 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຢາງພາລາ;
2. ໂຄສະນາ ເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຢາງພາລາ;
3. ເກັບກຳຂໍ້ມູນ ແລະ ສຳຫຼວດສະຖິຕິ ກ່ຽວກັບ ການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກຢາງພາລາ;
4. ອອກ, ຖອນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຫຼື ໂຈະການດຳເນີນທຸລະກິດກ່ຽວກັບຢາງພາລາ;
5. ເກັບກຳ ຂໍ້ມູນ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ;
6. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຝຶກອົບຮົມ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຢາງພາລາ;
7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຢາງພາລາ;
8. ປະສານສົມທົບກັບ ພະແນກການ, ອົງການ ຂັ້ນແຂວງ, ຄະນະກຳມະການປົກຄອງ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານຢາງພາລາ;
9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາງພາລາ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 49 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຢາງພາລາ;
2. ເຜີຍແຜ່, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຢາງພາລາ;
3. ເກັບກຳຂໍ້ມູນ ແລະ ສຳຫຼວດສະຖິຕິ ກ່ຽວກັບ ການປູກ, ການຜະລິດ, ການປຸງແຕ່ງ ແລະ ການສົ່ງອອກ ຢາງພາລາ;
4. ຢັ້ງຢືນການສ້າງລານທ້ອນໂຮມຢາງພາລາ;
5. ເກັບກຳ ຂໍ້ມູນ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບຢາງພາລາ;
6. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຝຶກອົບຮົມ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຢາງພາລາ;
7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານຢາງພາລາ;
8. ປະສານສົມທົບກັບ ຫ້ອງການ, ອົງການ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ໃນການຈັດຕັ້ງປະຕິບັດວຽກງານຢາງພາລາ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາງພາລາ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ**

ຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະສານງານກັບ ບ້ານ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອເຜີຍແຜ່ລະບຽບການ ກ່ຽວກັບວຽກງານຢາງພາລາ;

2. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ເພື່ອຍົກລະດັບທາງດ້ານວິຊາການຢາງພາລາ ເປັນ ແຕ່ລະໄລຍະ;

3. ຢັ້ງຢືນໄມ້ປູກຢາງພາລາ ທີ່ປູກໃນເນື້ອທີ່ຕ່ຳກວ່າ ໜຶ່ງພັນຫ້າຮ້ອຍຕາແມັດ ຫຼື ປູກແບບກະແຈກ ກະຈາຍ;

4. ເຂົ້າຮ່ວມໃນການໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບວຽກງານຢາງພາລາ;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາງພາລາ ຕໍ່ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ກັບຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານ ຢາງພາລາ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 52 ເນື້ອໃນການກວດກາ**

ການກວດກາ ວຽກງານຢາງພາລາ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນິຕິກຳ ກ່ຽວກັບຢາງພາລາ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ;
3. ການນຳໃຊ້ຢາງພາລາ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 53 ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຢາງພາລາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 54 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ເປັນຕົ້ນ ເປັນຕົວແບບ ການຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ຢາງພາລາ ແລະ ຮັກສາສິ່ງແວດລ້ອມ ຈະໄດ້ຮັບການຍ້ອງຍໍ ຕາມລະບຽບການ.

**ມາດຕາ 55 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 56 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 57 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 20 ເມສາ 2026 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ